# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການຫວ່ານກ້າ

(ສະບັບທົດລອງ)



ຂຽນໂດຍ: ທ້າວ ແພງສີ ພູວົງເພັດ

ຂໍ້ມູນຈາກ: ບ້ານ ໂຄກນ້ອຍ ເມືອງ ໄຊທານີ ນະຄອນຫລວງວຽງຈັນ

2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການຫວ່ານກ້າ

ຮີບໂຮມ ແລະຈັດໜ້າໂດຍ: ນາງ ກອງມະນີ ຄຳຜາຍ

ຜູ້ແຕ້ມ: ທ້າວ ສຸພາເພີນ ສຸວັນນະບັນດິດ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ເກດມະນີ ບັນດາສັກ

ອ.ຈ. ຄຳໄຫວ ອິນທະວົງ

ອ.ຈ. ລັ່ງ ແສງດາລາ

ອ.ຈ. ທອງຂັນ ສີລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸງຕາມຄວາມເໝາະສົມ

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

- ການເຮັດນາຫວ່ານກ້າແມ່ນອາຊີບຕົ້ນຕໍຂອງຊາວລາວເຮົາທີ່ເຄີຍເຮັດມາແຕ່ສະໄໝປູ່ຍ່າຕາຍາຍຈົນມາເຖິງທຸກວັນນີ້
- ພໍມາຮອດເດືອນຫົກລາວຂອງທຸກປີຊາວນາພາກັນກຽມເຂົ້າປູກເພື່ອທຳການຜະລິດໃຫ້ທ່ວງທັນກັບລະດູການເຊິ່ງເອີ້ນວ່າ ລະດູນາປີ

## ອຸປະກອນ

1. ໄຖ



2. ຄາດ



PDF created with pdfFactory Pro trial version www.pdffactory.com

3. ຄວາຍ



4. ແນວເຂົ້າ



5. ຈົກ, ຊວ້ານ



PDF created with pdfFactory Pro trial version www.pdffactory.com

6. ຝຸ່ນຄອກ



## <u>ຂັ້ນຕອນການຫວ່ານກ້າ</u>

1. ໄຖຮຸດຕາກ້າປະແຊ່ນ້ຳໄວ້ປະມານ 7-10 ມື້



PDF created with pdfFactory Pro trial version www.pdffactory.com

2. ເອົາແນວເຂົ້າປູກໄປແຊ່ປະມານ 2 ຄືນແລ້ວເອົາຂຶ້ນຈາກນ້ຳ 1 ຄືນເພື່ອໃຫ້ເຂົ້າອອກໜໍ່



3. ນີ້ຊິຫວ່ານກ້າຕ້ອງໄຖ-ຄາດໃຫ້ເປັນຕົມລະອຽດດີ ຫຼັງຈາກນັ້ນກໍເຕະຫູຕາກ້າບໍ່ໃຫ້ນ້ຳຫົ້ງຕາກ້າໃຫ້ມີແຕ່ຂີ້ຕົມພໍຫວ່ານເຂົ້າໃຫ້ຈັບດີ



PDF created with pdfFactory Pro trial version www.pdffactory.com

4. ນຳເຂົ້າປູກທີ່ກຽມໄວ້ນັ້ນມາຫວ່ານໃສ່ໃຫ້ພໍດີບໍ່ຖີ່ບໍ່ຫ່າງເກີນໄປເພື່ອ ໃຫ້ກ້າເປັນກີບງາມດີຕາມຄວາມເໝາະສົມຂອງຕາກ້າກັບເຂົ້າປູກ



5. ຫຼັງຈາກນັ້ນກ້າມີອາຍຸໄດ້ 10-12 ມື້ມີນ້ຳພໍທົ່ວໄຮ່ນາກໍນຳຝຸ່ນໄປ ຫວ່ານຕາມຄວາມເໝາະສົມໃຫ້ກ້າໃຫຍ່ໄວ ແລະງາມດີ




PDF created with pdfFactory Pro trial version www.pdffactory.com

6. ເມື່ອມີອາຍຸໄດ້ 18-20 ມື້ກໍນຳເອົາຝຸ່ນມາຫວ່ານໃສ່ຈັກໜ້ອຍເພື່ອໃຫ້ກ້າຫຼືກາງ່າຍ




## ຫຼັກການທີ່ສຳຄັນ

ເວລາໃສ່ຝຸ່ນບໍ່ຄວນໃຫ້ມີນ້ຳຫຼາຍ ແລະ ບໍ່ຄວນປ່ອຍນ້ຳອອກຈາກຕາກ້າເພາະຈະເຮັດໃຫ້ຝຸ່ນໄຫຼໄປນຳນ້ຳໝົດ

## ຄຸນປະໂຫຍດຂອງການເຮັດນາ

ເຂົ້າເປັນປັດໃຈໜຶ່ງທີ່ສຳຄັນ ແລະຂາດບໍ່ໄດ້ສຳຫຼັບຄົນລາວເຮົາ. ດັ່ງນັ້ນຄົນລາວຈຳນວນຫຼາຍຈຶ່ງໃຫ້ຄວາມສຳຄັນກັບການເຮັດນາເພາະຄົນເຮົາຕ້ອງກິນເຂົ້າທຸກມື້ນອກຈາກກິນໂດຍກົງແລ້ວເຂົ້າຍັງສາມາດແປຮູບເປັນແປ້ງເຊິ່ງສາມາດເອົາມາເຮັດເຂົ້າໜົມໄດ້ເຊັ່ນ: ເຂົ້າໜົມຄົກ, ເຂົ້າປາດ, ເຂົ້າໜົມແໜບ, ເຂົ້າໜົມອື່ງ ແລະ ອື່ນໆ

PDF created with pdfFactory Pro trial version www.pdffactory.com

## **ກາບ:** ຊາວນາບ້ານໂຄກໃຫຍ່

| | |
|---|---|
| ບ້ານໂຄກໃຫຍ່ | ມີສວນມີນາ |
| ເດືອນຫົກມາ | ກະກຽມເຂົ້າປູກ |
| ພໍ່ບອກລູກ | ຢ່ານອນຕື່ນສວາຍ |
| ໄປເອົາຄວາຍ | ອີ່ດຳກິນຫຍ້າ |
| ຢ່າຊັກຊ້າ | ໃຫ້ທັນກັບຝົນ |
| ທຸກໆ ຄົນ | ລົງມືໄຖຮຸດ |
| ເອົາຈົກຂຸດ | ສ້ອມແປງຄັນນາ |
| ພວກເຮົາມາ | ຫວ່ານກ້ານຳກັນ |
| ສິ່ງສຳຄັນ | ຕ້ອງໄຖ່ຕ້ອງຄາດ |
| ໃຫ້ພະຍາດ | ສ້ຽນດິນຕາຍໜີ |
| ບໍ່ໃຫ້ມີ | ຢູ່ໃນຕາກ້າ |
| ເພິ່ນບອກວ່າ | ກ້າເຈົ້າງາມຫຼາຍ |

PDF created with pdfFactory Pro trial version www.pdffactory.com

## **ເຊີ້ງ:** ຊວນກັນມາເຮັດນາ

ໂຮ.................ຮົວ...

| | |
|---|---|
| ເອີຍໝູ່ເອີຍໝູ່ | ມາຫວ່ານຕາກ້າ |
| ຮອດເດືອນຫົກມາ | ຝົນຕົກຝົນຫຼັ່ງ |
| ເຈົ້າຢ່າໄດ້ນັ່ງ | ຢູ່ເຮືອນຢູ່ຊານ |
| ໃຫ້ລູກແລະຫຼານ | ເຮັດສວນເຮັດນາ |
| ຢ່າໄດ້ຊັກຊ້າ | ກຽມຄາດກຽມໄຖ |
| ຈູງຄວາຍລົງໄປ | ໃຫ້ທັນກັບຝົນ |
| ເກີດມາເປັນຄົນ | ຕ້ອງດຸຕ້ອງໝັ່ນ |
| ຕ້ອງພຽນຂະຫຍັນ | ໝັ່ນເຮັດຈິ່ງດີ |

## **ເພງ:** ຊາວນາດຸໝັ່ນ

| | |
|---|---|
| ເຮົາ . . . | ເປັນລູກຊາວນາ |
| ເດືອນຫົກມາ | ກະກຽມຄາດໄຖ |
| ຊາວນາ | ເຮົາຕ້ອງຕັ້ງໃຈ (*2) |
| ຕ້ອງຄາດຕ້ອງໄຖ | ໃຫ້ທັນກັບຝົນ |
| ທຸກໆ ຄົນ | ຕ້ອງດຸຕ້ອງໝັ່ນ |
| ບໍ່ກຽດບໍ່ຄ້ານ | ວຽກໄຮ່ການນາ |
| ໄດ້ເວລາ | ພາກັນສ້າງສາ (*2) |
| ເພື່ອພັດທະນາ | ບ້ານເກີດຂອງເຮົາ |

PDF created with pdfFactory Pro trial version www.pdffactory.com

**ລຳ:** ຊາວນາດຸໝັ່ນ

| | |
|---|---|
| ເກີດມາເປັນ | ຊາວນາໃນຊາດນີ້ |
| ທຸກຫຼືຈົນ | ກໍເປັນຄົນນັ້ນລະໜາ |
| ຢ່າໄດ້ຢຽບຢາມ | ດູໝິ່ນ ແລະນິນທາ |
| ເປັນຊາວນາ | ນີ້ລະສະບາຍດີ (*2) |
| ມາເດີເຈົ້າ | ຊາວນາຮຸ່ນໃໝ່ (*2) |
| ເອົາໃຈໃສ່ຊ່ວຍ | ສ້າງເມືອງບ້ານໃຫ້ຮຸ່ງເຮືອງ |
| ເຮົາຈົ່ງເຕືອງ | ໂຮມທໍ່ສາມັກຄີ (*2) |
| ເຮົາມາສ້າງຄວາມດີ | ມາຊ່ວຍດຳນາລະຊ່ວຍອ້າຍ |

PDF created with pdfFactory Pro trial version www.pdffactory.com

# ຮູບ ແລະປະຫວັດຂອງຜູ້ຂຽນ



ຊື່: ທ້າວ ແພງສີ ພູວົງເພັດ

ອາຍຸ: 29 ປີ, ອາຊີບ: ປະຊາຊົນ

## ເຫດຜົນຂອງການຂຽນຫົວຂໍ້ນີ້

ສາຍເຫດທີ່ຂ້າພະເຈົ້າຂຽນກ່ຽວກັບຫົວຂໍ້ນີ້ເພາະວ່າຂ້າພະເຈົ້າເປັນລູກຊາວນາ ດັ່ງນັ້ນການເຮັດນາຫວ່ານກ້າແມ່ນເປັນອາຊີບຕົ້ນຕໍຂອງຂ້າພະເຈົ້າແທ້ຈິງ

PDF created with pdfFactory Pro trial version www.pdffactory.com